# ເຄື່ອງມືຂອງ WA Cares Fund | ລາຍການສັງຄົມ

## ລູກໂສ້ຕ່ຳງ່າຍໆ


**ຈະໃຊ້ຫົວເລື່ອງອັນນີ້ໄດ້ແນວໃດ ..... 1**

**WA Cares ແລະການປິ່ນປົວຣະຍະຍາວ ..... 2**

ເລື່ອງ #1 ..... 2

ເລື່ອງ #2 ..... 2

**ການບໍລິຈາກ ..... 4**

ເລື່ອງ #1 ..... 4

ເລື່ອງ #2 ..... 4

ເລື່ອງ #3 ..... 5

**ສະວັດດີການ ..... 6**

ເລື່ອງ #1 ..... 6

ເລື່ອງ #2 ..... 6

**ການຍົກເວັ້ນ ..... 8**

ເລື່ອງ #1 ..... 8

ເລື່ອງ #2 ..... 8


## ຈະໃຊ້ຫົວເລື່ອງອັນນີ້ໄດ້ແນວໃດ

ຫົວເລື່ອງຍາວອັນນີ້ໄດ້ຖືກອອກແບບມາເພື່ອຈະໃຊ້ໃຫ້ເປັນຂ່າວສານປະກາດ,ອີແມລ໌ສຳລັບພະນັກງານທຸກໆຄົນ,ຂ່າວສານຄືບໜ້າ, ຫົວເລື່ອງອິນຕຣາແນດ,ແລະທຸກໆບ່ອນອີກທີ່ທ່ານຕ້ອງການສົ່ງຂ່າວເລີກກ່ຽວກັບ WA Cares.

ສຳລັບເອກສານເຄື່ອງມືເພີ້ມເຕີມ,ລວມທັງປະຕິທິນຂອງຫົວເລື່ອງແລະຄຳແນະນຳ,ແວ່ປ້ຽມ [wacaresfund.wa.gov/toolkit](wacaresfund.wa.gov/toolkit).

# WA Cares ແລະການປິ່ນປົວລະຍະຍາວ

## ເລື່ອງ #1

**ຕິດປະກາດຮູບ:**




*[ດາວນ໌ໂຫລດຮູບອັນນີ້ດ້ວຍແບບທີ່ມີຄຸນນະພາບສູງ.]*

**ຕິດປະກາດຫົວເລື່ອງ:**
ການເບິ່ງແຍງດູແລຈາກຄອບຄົວແມ່ນຫີນແຂງຂອງການເບິ່ງແຍງດູແລລະຍະຍາວ.ມັນມີຄົນເບິ່ງແຍງດູແລຈາກຄອບຄົວເກືອບ 900,000 ຄົນຢູ່ໃນລັດຂອງພວກເຮົາທີ່ຊ່ວຍເຫລືອຄົນທີ່ເຮົາຮັກດ້ວຍພາລະກິດປະຈໍາວັນເຊັ່ນວ່າການອາບນໍ້າ,ການກິນອາຫານ, ການນຸ່ງເຄື່ອງ,ການຈັດແຈງອາຫານ,ການອອກຕະລາດຊື້ເອົາຂອງກິນ,ແລະອື່ນໆອີກ. WA Cares Fund ຈະອູ້ມຊູຜູ້ເບິ່ງແຍງດູແລຈາກຄອບຄົວແລະເຮັດໃຫ້ພາລະດ້ານການເງິນສໍາລັບການເບິ່ງແຍງດູແລລະຍະຍາວງ່າຍຂື້ນສໍາລັບພະນັກງານຂອງລັດວໍຊິງຕັນເມື່ອເຂົາເຈົ້າອາຍຸແກ່ຂື້ນ.ຮຽນຮູ້ເພີ້ມເຕີມໄດ້ທີ່ https://wacaresfund.wa.gov.

## ເລື່ອງ #2

**ຕິດປະກາດຮູບ:**




*[ດາວນ໌ໂຫລດຮູບອັນນີ້ດ້ວຍແບບທີ່ມີຄຸນນະພາບສູງ.]*

**ຕິດປະກາດຫົວເຣື່ອງ:** ໃນຂະນະທີ່ 7 ໃນ 10 ຄົນຂອງພວກເຮົາຈະຕ້ອງການການເບິ່ງແຍງດູແລຣະຍະຍາວໃນຈຸດໃດຈຸດນຶ່ງຂອງຊີວິດຂອງພວກເຮົາ,ພວກເຮົາສ່ວນຫລາຍແລ້ວບໍ່ມີທົນທາງທີ່ຈະຈ່າຍມັນໄດ້.ຍ້ອນວ່າການເບິ່ງແຍງດູແລຣະຍະຍາວບໍ່ແມ່ນການປິ່ນປົວພະຍາບານ,ມັນເກືອບຈະບໍ່ຖືກຄຸ້ມກັນຈ່າຍໃຫ້ເລີຍໂດຍປະກັນພັຍສຸຂະພາບຫລື Medicare. ເພື່ອຈະມີສິດໄດ້ຮັບການປິ່ນປົວຣະຍະຍາວຂອງ Medicaid, ທ່ານຕ້ອງໄດ້ຈ່າຍລຸດລົງໃນເງິນອອກສິນຊີວິດຂອງທ່ານພຽງແຕ່ $2,000 ເທົ່ານັ້ນ. WA Cares Fund ແມ່ນສະວັດດີການທີ່ເຮັດເອົາທີ່ເຮັດໃຫ້ປະກັນພັຍຂອງການເບິ່ງແຍງດູແລຣະຍະຍາວເປັນຣາຄາຍ່ອມເຍົາທີ່ຈ່າຍໄດ້ສຳລັບພະນັກງານຂອງຣັດວໍຊິງຕັນທຸກໆຄົນເມື່ອເວລາເຂົາເຈົ້າອາຍຸແກ່ລົງໄປ.ຮຽນຮູ້ເພີ້ມເຕີມໄດ້ທີ່ https://wacaresfund.wa.gov.

# ການບໍລິຈາກ

## ເລື່ອງ #1

ຕິດປະກາດຮູບ:




*ດາວນ໌ໂຫລດຮູບອັນນີ້ດ້ວຍແບບທີ່ມີຄຸນນະພາບສູງ.*

**ຕິດປະກາດຫົວເລື່ອງ:** WA Cares Fund ເປັນໂຄງການໃຫມ່ທີ່ເອົາໃຫ້ຄົນຣັດວໍຊິງຕັນຜູ້ທີ່ເຮັດວຽກຢູ່ການເຂົ້າເຖິງການຄຸ້ມກັນການເບິ່ງແຍງດູແລຣະຍະຍາວເມື່ອເວລາເຂົາເຈົ້າຕ້ອງການມັນ.ພະນັກງານຂອງຣັດວໍຊິງຕັນຫາເງິນໄດ້ $36,500 ໃນຕະລອດຊີວິດການຄຸ້ມກັນປະກັນພັຍການເບິ່ງແຍງດູແລຣະຍະຍາວ (ຖືກດັດແປງແຕ່ລະປີສໍາລັບຄ່າຄອງຊີບຂຶ້ນ) ໂດຍການບໍລິຈາກ 0.58% ຂອງເງິນເດືອນຂອງເຂົາເຈົ້າໃນຣະຫວ່າງປີເຮັດວຽກຂອງເຂົາເຈົ້າ.ການບໍລິຈາກເງິນໃສ່ໂຄງການເລີ້ມຕົ້ນເດືອນຈຸນລາຍ 1, 2023. ຮຽນຮູ້ເພີ້ມເຕີມໄດ້ທີ່ https://wacaresfund.wa.gov/earning-your-benefits.

## ເລື່ອງ #2

ຕິດປະກາດຮູບ:




*ດາວນ໌ໂຫລດຮູບອັນນີ້ດ້ວຍແບບທີ່ມີຄຸນນະພາບສູງ.*

ຕິດປະກາດຮູບ:

WA Cares Fund ເປັນໂຄງການໃຫມ່ທີ່ເອົາໃຫ້ຄົນຣັດວໍຊິງຕັນຜູ້ທີ່ເຮັດວຽກຢູ່ການເຂົ້າເຖິງການຄຸ້ມກັນການເບິ່ງແຍງດູແລຣະຍະຍາວເມື່ອເວລາເຂົາເຈົ້າຕ້ອງການມັນ.ໂດຍການບໍຣິຈາກ 0.58% ຂອງເຊັກເບີກເງິນແຕ່ລະເຊັກໃນຂະນະທີ່ເຮັດວຽກຢູ່.ພະນັກງານຂອງຣັດວໍຊິງຕັນຫາເງິນໄດ້ $36,500 ໃນຕະລອດຊີວິດການຄຸ້ມກັນປະກັນພັຍການເບິ່ງແຍງດູແລຣະຍະຍາວ (ຖືກດັດແປງແຕ່ລະປີສໍາລັບຄ່າຄອງຊີບຂຶ້ນ) .ຣາຍໄດ້ທັມມະດາຂອງພະນັກງານຂອງຣັດວໍຊິງຕັນຟຽງແຕ່ກາຍ $50,000 ຕໍ່ປີຈະບໍຣິຈາກປະມານ $24 ຕໍ່ເດືອນ.ຮຽນຮູ້ເພີ້ມເຕີມແລະຄິດໄລ່ຈໍານວນເງິນບໍຣິຈາກຂອງທ່ານໄດ້ທີ່ https://wacaresfund.wa.gov/earning-your-benefits.

## ເຣື່ອງ #3

**ຕິດປະກາດຮູບ:**




*ດາວນ໌ໂຫລດຮູບອັນນີ້ດ້ວຍແບບທີ່ມີຄຸນນະພາບສູງ.*

**ຕິດປະກາດຫົວເຣື່ອງ:** .ໂດຍການບໍຣິຈາກ 0.58% ຂອງເຊັກເບີກເງິນແຕ່ລະເຊັກໃນຣະຫວ່າງປີເຮັດວຽກຢູ່ຂອງເຂົາເຈົ້າ.ພະນັກງານຂອງຣັດວໍຊິງຕັນຫາເງິນໄດ້ການເຂົ້າເຖິງ $36,500 ໃນສະວັດດີການເບິ່ງແຍງດູແລຣະຍະຍາວ.ທ່ານເຮັດວຽກໄດ້ການເຂົ້າເຖິງສະວັດດີການຕະລອດຊີວິດໂດຍການບໍຣິຈາກຢ່າງຫນ້ອຍ 10 ປີໂດຍປາສຈາກການຂາດຕອນເຖິງ 5+ ປີ.ທ່ານຍັງສາມາດເຂົ້າເຖິງສະວັດດີການໄດ້ອີກຄືກັນຖ້າຫາກວ່າທ່ານບໍຣິຈາກ 3 ປີຂອງ 6 ປີຜ່ານມາໃນເວລາທີ່ທ່ານຮ້ອງຂໍເອົາ.ບຸກຄົນທີ່ເກີດກ່ອນປີ 1968 ສາມາດເຮັດວຽກເອົາການເຂົ້າເຖິງຕະລອດຊີວິດເຖິງ 10% ຂອງຈໍານວນການຊ່ວຍເຫລືອເຕັມສໍາລັບແຕ່ລະປີທີ່ເຂົາເຈົ້າບໍຣິຈາກ.ຮຽນຮູ້ເພີ້ມເຕີໄດ້ທີ່ https://wacaresfund.wa.gov/wa-cares-benefits.

# ສະວັດດີການ

## ເຣື່ອງ #1

**ຕິດປະກາດຮູບ:**




*ດາວນ໌ໂຫລດຮູບອັນນີ້ດ້ວຍແບບທີ່ມີຄຸນນະພາບສູງ.*

**ຕິດປະກາດຫົວເຣື່ອງ:** ໂດຍການບໍຣິຈາກ 0.58% ຂອງເຊັກເບີກເງິນແຕ່ລະເຊັກໃສ່ WA Cares Fund, ພະນັກງານຂອງຣັດວໍຊິງຕັນຫາເງິນໄດ້ການເຂົ້າເຖິງ $36,500 ໃນສະວັດດີການເບິ່ງແຍງດູແລຣະຍະຍາວ.ຫລັງຈາກທີ່ຄົບກົດກຳນົດຂອງການບໍຣິຈາກ,ເມື່ອເວລາທ່ານຕ້ອງການການເບິ່ງແຍງດູແລ,ທ່ານຈະໄດ້ການເຂົ້າເຖິງທີ່ບໍ່ຈຳກັດເຖິງສະວັດດີການຂອງທ່ານໂດຍທັນທີໂລດໂດຍບໍ່ມີເງິນຫັກອອກແລະບໍ່ມີເງິນຈ່າຍຮ່ວມ.ປະມານນຶ່ງສ່ວນສາມຂອງບຸກຄົນທີ່ຕ້ອງການການເບິ່ງແຍງດູແລນຶ່ງປີຫລືຕ່ຳກວ່າ,ແລະສຳລັບບຸກຄົນທີ່ WA Cares Fund ອາດຈະສາມາດທີ່ຈະຄຸ້ມກັນການເບິ່ງແຍງດູແລທຸກໆຢ່າງທີ່ເຂົາເຈົ້າຕ້ອງການ.ສຳລັບຄົນອື່ນ, WA Cares ເອົາໃຫ້ຄອບຄົວການຜ່ອນຄາຍທັນທີແລະຫ້ອງຫາຍໃຈເພື່ອຈະວາງແຜນສຳລັບຄ່າໃຊ້ຈ່າຍຂອງການເບິ່ງແຍງດູແລໃນອະນາຄົດ.ຮຽນຮູ້ເພີ້ມເຕີມໄດ້ທີ່ https://wacaresfund.wa.gov/wa-cares-benefits.

## ເຣື່ອງ #2

**ຕິດປະກາດຮູບ:**




*ດາວນ໌ໂຫລດຮູບອັນນີ້ດ້ວຍແບບທີ່ມີຄຸນນະພາບສູງ.*

**ຕິດປະກາດຫົວເຣື່ອງ:** ໂດຍການບໍຣິຈາກ 0.58% ຂອງເຊັກເບີກເງິນແຕ່ລະເຊັກໃສ່ WA Cares Fund, ພະນັກງານຂອງຣັດວໍຊິງຕັນຫາເງິນໄດ້ການເຂົ້າເຖິງ $36,500 ໃນສະວັດດີການເບິ່ງແຍງດູແລຣະຍະຍາວ.ໃນຂະນະທີ່ສະວັດດີການ WA Cares ສາມາດຖືກໃຊ້ເພື່ອຈະຈ່າຍສໍາລັບການເບິ່ງແຍງດູແລໃນສະຖານທີ່ແບບບ່ອນຢູ່ອາສັຍເຊັ່ນວ່າເຣືອນເບິ່ງແຍງຜູ້ເຖົ້າ,ມັນຍັງສາມາດຄຸ້ມກັນຈ່າຍໃຫ້ອີກຄືກັນການບໍຣິການແລະການອູ້ມຊູເພື່ອຈະຊ່ວຍທ່ານໃຫ້ອາສັຍຢູ່ເຣືອນ – ເຊັ່ນວ່າການຝຶກຝົນແລະການຈ່າຍເງິນໃຫ້ຜູ້ເບິ່ງແຍງດູແລຈາກຄອບຄົວ,ການຈ່າຍເງິນໃຫ້ຜູ້ເບິ່ງແຍງດູແລຢູ່ເຣືອນໂດຍນັກວິຊາການ,ການດັດແປງຄວາມປອດພັຍຂອງເຣືອນ,ອາຫານສົ່ງໃຫ້ຕາມເຣືອນ,ການຂົນສົ່ງໄປມາ,ແລະເທັກໂນໂລຈີຊ່ວຍເຫລືອເຊັ່ນວ່າເຄື່ອງເຕືອນການກິນຢາ. ຮຽນຮູ້ເພີ້ມເຕີມຢູ່ທີ່ https://wacaresfund.wa.gov/wa-cares-benefits.

# ການຍົກເວັ້ນ

## ເຣື່ອງ #1

**ຕິດປະກາດຮູບ:**




*ດາວນ໌ໂຫລດຮູບອັນນີ້ດ້ວຍແບບທີ່ມີຄຸນນະພາບສູງ.*

**ຕິດປະກາດຫົວເຣື່ອງ:** ໃນຂະນະທີ່ພະນັກງານຂອງຣັດວໍຊິງຕັນເກືອບຫມົດທຸກຄົນຈະບໍຣິຈາກໃສ່ WA Cares, ການຍົກເວັ້ນຈະມີໄວ້ໃຫ້ສຳລັບກຸ່ມບຸນຄົນບາງກຸ່ມຜູ້ທີ່ບໍ່ຄ້າຍຄືວ່າຈະສາມາດທີ່ຈະໃຊ້ສະວັດດີການຂອງເຂົາເຈົ້າ.ຄຳຮ້ອງຂໍເອົາການຍົກເວັ້ນຕາມສະມັກໃຈແມ່ນມີໄວ້ໃຫ້ສຳລັບພະນັກງານຜູ້ທີ່ອາສັຍຢູ່ຕ່າງຣັດ,ຜົວເມັຍຂອງສະມາຊິກກອງທັບທະຫານປະຈຳຫນ້າທີ່ຂອງ U.S., ພະນັກງານທີ່ມີວີຊາບໍ່ແມ່ນຄົນເຂົ້າເມືອງ,ແລະນັກຮົບເກົ່າທີ່ມີຄວາມເສັຽອົງຄະກ່ຽວພັນນຳການຮັບໃຊ້ກອງທັບ 70% ຫລືສູງກວ່າ.ຮຽນຮູ້ເພີ້ມເຕີມໄດ້ທີ່ https://wacaresfund.wa.gov/exemptions.

## ເຣື່ອງ #2

**ຕິດປະກາດຮູບ:**




*ດາວນ໌ໂຫລດຮູບອັນນີ້ດ້ວຍແບບທີ່ມີຄຸນນະພາບສູງ.*

**ຕິດປະກາດຫົວເຣື່ອງ:** ພະນັກງານຜູ້ທີ່ມີປະກັນພັຍການເບິ່ງແຍງດູແລຣະຍະຍາວຂອງເອກຊົນໃນວັນທີຫລືກ່ອນເດືອນໂນເວັມເບີ 1, 2021, ສາມາດທີ່ຈະຮ້ອງຂໍເອົາການຍົກເວັ້ນຈາກ WA Cares Fund ຈົນກວ່າເດືອນດີເຊັມເບີ 31, 2022. ພາຍໃຕ້ກົດໝາຍປັດຈຸບັນ,ການຍົກເວັ້ນເຫລົ່ານີ້ແມ່ນຖາວອນ.ຖ້າຫາກວ່າທ່ານໄດ້ຮ້ອງຂໍເອົາການຍົກເວັ້ນປະກັນພັຍເອກຊົນແລ້ວແລະໄດ້ຮັບໜັງສືອະນຸມັດຈາກ ESD, ການຍົກເວັ້ນຂອງທ່ານຍັງມີຄຸນຄ່າໃຊ້ການໄດ້ຢູ່.ທ່ານບໍ່ຕ້ອງໄດ້ຮ້ອງຂໍເອົາໃຫມ່ອີກ,ແຕ່ວ່າທ່ານຄວນຈະເຮັດໃຫ້ແນ່ໃຈວ່ານາຍຈ້າງຂອງທ່ານມີໜັງສືຍົກເວັ້ນຂອງທ່ານໃນບັນທຶກ.ຖ້າຫາກວ່າທ່ານບໍ່ເຫັນໜັງສືຂອງທ່ານ,ທ່ານສາມາດດາວໂຫລດໂກປີໃບນຶ່ງຈາກບັນຊີ Secure Access Washington ທີ່ທ່ານໄດ້ໃຊ້ເພື່ອຈະຮ້ອງຂໍເອົາ.ຮຽນຮູ້ເພີ້ມເຕີມໄດ້ທີ່ https://wacaresfund.wa.gov/exemptions.